**ມິຊຊາອາທິດທີ 6 ກາລະນິດທຳມະດາ**

**ວັນທີ 13 ກຸມພາ 2022**



**ພຣະວໍລະສານໂດຍນັກບຸນລູກາ 6, 17, 20-26**

ໃນເວລານັ້ນ, ເມື່ອພຣະເຢຊູເຈົ້າສະເດັດລົງຈາກພູພ້ອມກັບພວກສາວົກ, ພຣະອົງກໍຊົງຢຸດເຊົາຢູ່ທີ່ງພຽງ. ຢູ່ທີ່ນັ້ນມີໝູ່ລູກສິດແລະປະຊາຊົນມາກມາຍຈາກແຂວງຢູດາ, ຈາກເຢລູຊາແລມ, ຈາກເມືອງຊີໂຣແລະຊີດອນທີ່ຢູ່ແຄມທະເລ. ພຣະອົງຊົງເງີຍໜ້າຂຶ້ນເບິ່ງພວກລູກສິດແລະກ່າວວ່າ:

ບຸນມະຫາລາບແກ່ພວກທ່ານຜູ້ທຸກຈົນ, ຍ້ອນວ່າອານາຈັກຂອງພຣະເຈົ້າເປັນຂອງພວກທ່ານ.

ບຸນມະຫາລາບແກ່ພວກທ່ານທີ່ກຳລັງຫອດຫິວ, ຍ້ອນວ່າພວກທ່ານຈະໄດ້ອີ່ມໜຳສຳລານ.

ບຸນມະຫາລາບແກ່ພວກທ່ານທີ່ກຳລັງຮ້ອງໄຫ້, ຍ້ອນວ່າພວກທ່ານຈະໄດ້ຍິ້ມຫົວ.

ບຸນມະຫາລາບແກ່ພວກທ່ານເມື່ອຖືກເຂົາຄຽດຊັງ, ຂັບໄລ່, ສົບປະໝາດແລະຂັດຊື່ຂອງພວກທ່ານຖິ້ມເໝືອນດັ່ງອັນຊົ່ວຊ້າຍ້ອນບຸດມະນຸດ. ໃນວັນນັ້ນ, ພວກທ່ານຈົ່ງຊື່ນຊົມໂດດເຕັ້ນຍິນດີ, ຍ້ອນວ່າບຳເນັດລາງວັນຂອງພວກທ່ານຍິ່ງໃຫຍ່ໃນສະຫວັນ. ບັນພະບຸລຸດຂອງພວກນັ້ນກໍເຄີຍທຳຕໍ່ບັນດາປະພາສົກແບບນີ້ແລ.

ເວນກັມແກ່ພວກເຈົ້າເຫລົ່າເສດຖີ, ຍ້ອນວ່າພວກເຈົ້າໄດ້ຮັບທຸເລົາບັນເທົາໃຈແລ້ວ.

ເວນກັມແກ່ພວກເຈົ້າຜູ້ອີ່ມໜຳສຳລານຢູ່ດຽວນີ້, ຍ້ອນວ່າພວກເຈົ້າຈະຫອດຫິວ.

ເວັນກັມແກ່ພວກເຈົ້າຜູ້ຍິ້ມຫົວຢູ່ດຽວນີ້, ຍ້ອນວ່າພວກເຈົ້າຈະໄວ້ທຸກແລະຮ້ອງໄຫ້ກິນນ້ຳຕາ.

ເວັນກັມແກ່ພວກເຈົ້າເມື່ອມີຄົນທັງຫລາຍຊົມເຊີຍສັນລະເສີນ! ບັນພະບຸລຸດຂອງພວກເຂົາກໍເຄີຍທຳຕໍ່ບັນດາປະພາສົກຫຽມແບບນີ້ແລ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າໃນບົດອ່ານທັງສາມບົດແລະບົດເພງສັກສິດໃນວັນອາທິດນີ້ລ້ວນແຕ່ກ່າວເຖິງບຸນລາບແກ່ຜູ້ທີ່ໄວ້ວາງໃຈແລະເພິ່ງອີງໃນພຣະເຈົ້າ.

ໃນບົດອ່ານທີໜຶ່ງ, ປະພາສົກເຢເລມີໃຊ້ຮູພາບຂອງການຈະເລີນເຕີບໂຕຂອງຕົ້ນໄມ້ເພື່ອກ່າວເຖິງຄວາມໄວ້ວາງໃຈແລະເພິ່ງອີງໃນພຣະເຈົ້າ. ຜູ້ທີ່ໄວ້ວາງໃຈໃນພຣະເຈົ້າຈະປຽບເໝືອນຕົ້ນໄມ້ທີ່ປູກຢູ່ແຄມຝັ່ງນໍ້າ, ມັນຈະຈະເລີນເຕີບໂຕ, ຂຽວຊຸ່ມຊື່ນແລະມີຊີວິດຢູ່ສະເໝີ. ສ່ວນຜູ້ທີ່ໄວ້ວາງໃຈນຳຄົນຈະປຽບເໝືອນຕົ້ນໄມ້ທີ່ປູກຢູ່ໃນດິນແຫ້ງກະແດ້ງ, ມັນຈະຫ່ຽວແຫ້ງແລະຕາຍໄປ. ບົດເພງສັກສິດຂອງວັນອາທິດນີ້ກໍກ່າວເຊັ່ນດຽວກັນ: "ບຸນລາບແກ່ຜູ້ທີ່ໄວ້ວາງໃຈໃນພຣະເຈົ້າ".

ສ່ວນໃນບົດອ່ານທີສອງ, ນັກບຸນເປົາໂລກໍກ່າວບອກສອນສັດຕະບຸລຸດຊາວເມືອງໂກຣິນໂທວ່າ: ໃຫ້ພວກເຈົ້າໄວ້ວາງໃຈແລະເຊື່ອໃນພຣະເຢຊູຜູ້ໄດ້ໄຊຊະນະແລະກັບເປັນຄືນມາຈາກຄວາມຕາຍ. ເພາະຖ້າພຣະເຢຊູເຈົ້າບໍ່ກັບເປັນຄືນມາຈາກຄວາມຕາຍແລ້ວ, ຄວາມເຊື່ອຂອງພວກເຮົາກໍບໍ່ມີປະໂຫຍດຫຍັງ. ແຕ່ວ່າ, ພຣະເຢຊູເຈົ້າໄດ້ໄຊຊະນະຄວາມຕາຍແລ້ວ. ດັ່ງນັ້ນ, ພວກເຮົາຜູ້ທີ່ເຊື່ອໃນພຣະອົງກໍຈະໄດ້ກັບເປັນຄືນມາເໝືອນກັບພຣະອົງ.

ແລະໃນພຣະວໍລະສານ, ພຣະເຢຊູເຈົ້າກໍສັ່ງສອນຝູງຊົນແລະພວກສາວົກໃຫ້ໄວ້ວາງໃຈແລະເຊື່ອໝັ້ນໃນບຳເນັດລາງວັນທີ່ພຣະເຈົ້າຈະປະທານໃຫ້ພວກເຮົາ. ແລະຜູ້ທີ່ໄວ້ວາງໃຈໃນພຣະເຈົ້ານັ້ນຈະເປັນບຸນອັນຍິ່ງໃຫຍ່ສຳລັບພວກເຂົາ. ຍ້ອນບຳເນັດລາງວັນອັນຍິ່ງໃຫຍ່ທີ່ສຸດທີ່ພວກເຂົາຈະໄດ້ຮັບນັ້ນແມ່ນອານາຈັກສະຫວັນນັ້ນເອງ.

ສ່ວນພວກເຮົາເດ, ພວກເຮົາໄດ້ໄວ້ວາງໃຈແລະເພິ່ງອີງໃນພຣະເຈົ້າໃນຊີວິດຂອງພວກເຮົາບໍ? ພວກເຮົາໄດ້ເຊື່ອໃນວາຈາຂອງພຣະອົງບໍ? ພວກເຮົາໄດ້ແລ່ນຫາພຣະອົງເວລາພວກເຮົາຖືກທົດສອບແລະພົບກັບບັນຫາໃນຊີວິດບໍ? ຫລືພວກເຮົາເພິ່ງອີງນຳຄົນແລະວັດຖຸສິ່ງຂອງຢູ່ໃນໂລກນີ້?

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດເພີ່ມທະວີຄວາມເຊື່ອໃຫ້ລູກດ້ວຍ. ເພື່ອລູກຈະໄດ້ເຊື່ອຢ່າງໝັ້ນຄົງໃນຄວາມຮັກແລະການດູແລຮັກສາຂອງພຣະອົງຢູ່ໃນໂລກນີ້. ແລະເມື່ອຈາກໂລກນີ້ໄປແລ້ວ, ຂໍໃຫ້ລູກໄດ້ຢູ່ຮ່ວມສຸກກັບພຣະອົງໃນອານາຈັກຂອງພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ